DEVELOPMENTAL DISABILITIES ADMINISTRATION (DDA)

# ການແຈ້ງການກ່ຽວກັບການກວດທວນຄືນເບິ່ງເງື່ອນໄຂໄດ້ຮັບໃນອາຍຸຊາວ (20) ປີ

## Notification of Age Twenty (20) Eligibility Review

ຊື່ ແລະ ທີ່ຢູ່ຂອງລູກຄ້າ

ຊື່ ແລະ ທີ່ຢູ່ຂອງຜູ້ຕາງໜ້າຂອງລູກຄ້າ

ກ່ຽວກັບ: **ການແຈ້ງການກ່ຽວກັບການກວດທວນຄືນເບິ່ງເງື່ອນໄຂໄດ້ຮັບໃນອາຍຸຊາວ (20) ປີ**

ລູກຂອງທ່ານໃນປັດຈຸບັນນີ້ມີເງື່ອນໄຂໄດ້ຮັບໂຄງການຂອງ Developmental Disabilities Administration (DDA) (ພະແນກກ່ຽວກັບຄວາມເສັຽອົງຄະດ້ານການຈະເຣີນເຕີບໂຕ) . ເງື່ອນໄຂໄດ້ຮັບຂອງທ່ານນຳພະແນກ DDA ຕ້ອງຖືກກວດເບິ່ງຄືນກ່ອນວັນເກີດປີທີຊາວ (20th) ຂອງທ່ານ. ຣາຍຣະອຽດທີ່ພວກເຮົາມີຢູ່ອາດຈະບໍ່ພຽງພໍສຳລັບທ່ານທີ່ຈະດຳເນີນເງື່ອນໄຂໄດ້ຮັບ DDA ຂອງທ່ານຕໍ່ໄປພາຍໃຕ້ເງື່ອນໄຂແນວນຶ່ງຂອງເງື່ອນໄຂຕໍ່ລົງໄປນີ້: ຄວາມເສັຽອົງຄະດ້ານມັນສະມອງ, ໂຣກອຳມະພາດທາງສະມອງ, ໂຣກບ້າໝູ, ໂຣກລະເມີຜີ້ຝັນ, ຫລື ສະພາບໂຣກຈິດ **ຫລື** ສະພາບອື່ນໆທີ່ຄ້າຍຄືກັບຄວາມເສັຽອົງຄະທາງດ້ານມັນສະມອງ. ພວກເຮົາໄດ້ຕິດຄັດຕາຕະລາງຂອງເອກສານບັນທຶກທີ່ຈຳເປັນຕ້ອງມີມານຳເພື່ອຈະບອກໃຫ້ທ່ານຮູ້ຈັກວ່າຣາຍຣະອຽດອັນໃດແດ່ທີ່ຕ້ອງການ.

### ທ່ານຕ້ອງໄດ້ເຮັດຫຍັງແດ່?

DDA ຈະຍິນດີທີ່ຈະສົ່ງໜັງສືໄປຂໍເອົາຣາຍຣະອຽດທີ່ຕ້ອງການສຳລັບການພິຈາຣະນາເບິ່ງໃຫມ່ອັນນີ້. ຖ້າຫາກວ່າທ່ານຕ້ອງການຢາກໃຫ້ DDA ທີ່ຈະສົ່ງໜັງສືໄປຂໍເອົາຣາຍຣະອຽດ, ກະຣຸນາຂຽນປະກອບໃບຟອມອະນຸຍາດທີ່ຖືກຄັດມານຳຕາມຕໍ່ລົງໄປນີ້:

1. ຂຽນໃສ່ຊື່ຂອງສະຖານທີ່, ຜູ້ໃຫ້ການບໍຣິການ, ແລະ ສະຖານທີ່ປິ່ນປົວທີ່ພວກເຮົາຈະຮ້ອງຂໍເອົາຣາຍຣະອຽດໃສ່ໃນຟອມອະນຸຍາດໃບນີ້. ຂຽນຣາຍຣະອຽດການຕິດຕໍ່ຫາສຳລັບທຸກໆບ່ອນທີ່ຖືກບົ່ງຊື່ຢູ່ໃນໃບຟອມອະນຸຍາດ.
2. ເຊັນຊື່ແລະໃສ່ວັນທີໃບຟອມອະນຸຍາດທີ່ຖືກສອດໃສ່ມານຳ,ແລະ
3. ສົ່ງໃບຟອມກັບຄືນມາຫາ DDA.

### ແມ່ນຫຍັງຈະເກີດຂຶ້ນຖ້າຫາກວ່າຂ້ອຍບໍ່ຕອບຄຳຮ້ອງຂໍອັນນີ້?

ກະຣຸນາຕອບມາໄວເທົ່າທີ່ຈະໄວໄດ້, ແຕ່ວ່າບໍ່ກາຍເກີນ 90 ວັນກ່ອນວັນເກີດປີທີຊາວ (20th) ຂອງທ່ານ. ຖ້າພວກເຮົາບໍ່ໄດ້ຍິນຂ່າວຈາກທ່ານກ່ອນວັນທີ __________, ພວກເຮົາຈະກວດເບິ່ງເງື່ອນໄຂໄດ້ຮັບຂອງທ່ານໂດຍການໃຊ້ຣາຍຣະອຽດທີ່ພວກເຮົາມີໄວ້ໃຫ້ຢູ່ໃນສຳນວນເອກສານລູກຄ້າຂອງທ່ານ. ຖ້າຫາກວ່າມັນບໍ່ມີຣາຍຣະອຽດພຽງພໍເພື່ອຈະຢືນຢັນຄຳຕັດສິນໃນເງື່ອນໄຂໄດ້ຮັບ, ແລ້ວເງື່ອນໄຂໄດ້ຮັບຂອງທ່ານສຳລັບ DDA ຈະຖືກຕັດໃນວັນເກີດປີທີ 20th ຂອງທ່ານ.

ຖ້າທ່ານມີຄຳຖາມແນວໃດ ຈົ່ງຕິດຕໍ່ຫາ:

| ______________________ | ______________________ | ______________________ |
|---|---|---|
| ຊື່ | ເລກໂທຣະສັບ | ທີ່ຢູ່ອີແມລ໌ |

ໂກປີຂອງກົດຣະບຽບຂອງຣັດທີ່ປົກຄອງເງື່ອນໄຂໄດ້ຮັບ (WAC 388-823) ແມ່ນມີໄວ້ໃຫ້ຕາມການຮ້ອງຂໍ ຫລື ທາງອອນລາຍນ໌ທີ່ https://www.dshs.wa.gov/dda/consumers-and-families/eligibility.

ສອດໃສ່ມານຳ: ຕາຕະລາງຂອງເອກສານບັນທຶກທີ່ຈຳເປັນຕ້ອງມີ
ໃບຟອມອະນຸຍາດ (DSHS 14-012)

cc: ສຳນວນເອກສານຂອງລູກຄ້າ

## ຕາຕະລາງຂອງເອກສານບັນທຶກທີ່ຈຳເປັນຕ້ອງມີ

| ສະພາບຂອງຄວາມເສັ່ຽອິງຄະ | ການວິຈັຍໂຣກ | ຜູ້ວິຈັຍໂຣກ | ບັນທຶກອື່ນໆ |
|---|---|---|---|
| ຄວາມເສັ່ຽອິງຄະດ້ານມັນສະມອງ (Intellectual Disability) | ຄວາມເສັ່ຽອິງຄະດ້ານມັນສະມອງ (Intellectual Disability) | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ທ່ານໝໍຈິດວິທະຍາທີ່ໂຮງຮຽນຢັ້ງຢືນໃນວໍຊິງຕັນ ຫລື ທ່ານໝໍຈິດວິທະຍາທີ່ມີໃບປະກາດຈາກໂຮງຮຽນອື່ນທີ່ຖືກຢັ້ງຢືນໂດຍສະມາຄົມຂອງໂຮງຮຽນທ່ານຫມໍຈິດວິທະຍາແຫ່ງຊາດ | ໃບລາຍງານໂຣກຈິດຄົບຖ້ວນລວມທັງຄະແນນ Full Scale IQ ຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕໍ່າກວ່າກຳນົດ, ແລະ ຄະແນນການສອບເບິ່ງຄວາມຊຳນານໃນການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕໍ່າກວ່າກຳນົດ. |
| ສະມອງພິການ (Cerebral Palsy) | ໂຣກສະມອງພິການ (Cerebral Palsy)<br>ພາວະແຂນຂາອຳມະພາດ (Quadriplegia)<br>ອຳມະພາດເຄິ່ງສ່ວນ (Hemiplegia)<br>ອຳມະພາດສ່ວນດຽວ (Diplegia) | ທ່ານໝໍທີ່ມີໃບປະກາດ | ອາການກ່ອນອາຍຸ 3 ປີ, ແລະ ລາຍລະອຽດທີ່ອູ້ມຊູຄວາມຕ້ອງການສຳລັບຄວາມຊ່ວຍເຫລືອທາງຮ່າງກາຍໂດຍກິງປະຈຳວັນໃນສອງຈຳພວກ ຫລື ຫລາຍກວ່າ (ການເຂົ້າຫ້ອງນໍ້າ, ການອາບນໍ້າ, ການກິນອາຫານ, ການນຸ່ງເຄື່ອງ, ການເຄື່ອນໄຫວໄປມາ, ຫລື ການສື່ສານຕິດຕໍ່) . |
| ໂຣກລົມບ້າຫມູ (Epilepsy) | ໂຣກລົມບ້າໝູ ຫລື ໂຣກຊັກຄິ້ນ (Epilepsy or Seizure disorder | ທ່ານຫມໍໂຣກປະສາດທີ່ຖືກຢັ້ງຢືນໂດຍຄະນະກັມມະການ | ການວິຈັຍໂຣກທີ່ຖືກອີງໃສ່ປະວັດການພະຍາບານ ແລະ ການກວດເບິ່ງໂຣກປະສາດ, ການຢັ້ງຢືນຈາກທ່ານຫມໍ ຫລື ທ່ານຫມໍໂຣກຈິດກ່ຽວກັບການຊັກບ້າຫມູທີ່ຄວບຄຸມບໍ່ໄດ້ ແລະ ເກີດຂຶ້ນຕະລອດມາ ຫລື ເກີດຂຶ້ນເປັນປະຈຳ, ແລະ ການກວດເບິ່ງຄວາມຊຳນານໃນການປັບຕົວຊຶ່ງສະແດງໃຫ້ເຫັນການມີຂອບເຂດຈຳກັດຮ້າຍແຮງໃນການທຳງານການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕໍ່າກວ່າກຳນົດ. |
| ໂຣກລະເມີເພີ້ຝັນ (Autism) (per DSM-IV) | ໂຣກລົມບ້າໝູ ຫລື ໂຣກຊັກຄິ້ນ (Autism or Autistic Disorder) Per 299.00 in DSM-IV-TR | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ຜູ້ຝຶກຫັດນາຍຫມໍລົງທະບຽນທີ່ກ້າວຫນ້າ (ARNP) ທີ່ພົວພັນນຳໂຣກລະເມີເພີ້ຝັນ ຫລື ສູນກາງພັດທະນາ ຫລື ຄະນະກັມມະການຢັ້ງຢືນ: ທ່ານຫມໍໂຣກປະສາດ, ທ່ານຫມໍໂຣກຈິດ, ຫລື ທ່ານຫມໍປິ່ນປົວເດັກເຣື່ອງການເຕີບໂຕ ແລະ ການປະພຶດ | ການຕີຣາຄາປະເມີນຜົນຄົບຖ້ວນ DSM IV ທີ່ສອດຄ່ອງນຳກົດເກນຂອງການກວດວິຈັຍທຸກໆຢ່າງ, ຫລັກຖານຂອງການຊັກຊ້າ ຫລື ການທຳງານທີ່ຜິດປົກກະຕິກ່ອນອາຍຸ 3 ປີໃນຄວາມຊຳນານທາງສັງຄົມ, ພາສາ, ການຕິດຕໍ່ສື່ສານ ຫລື ການຫລິ້ນທີ່ເປັນສັນຍາລັກ ຫລື ການວາດພາບ, ແລະ ການກວດເບິ່ງຄວາມຊຳນານໃນການປັບຕົວຊຶ່ງສະແດງໃຫ້ເຫັການມີຂອບເຂດຈຳກັດຮ້າຍແຮງໃນການທຳງານການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕໍ່າກວ່າກຳນົດ. |
| ໂຣກລະເມີເພີ້ຝັນໄປທົ່ວທີບ (Autism Spectrum Disorder) (per DSM-V) | ໂຣກລະເມີເພີ້ຝັນໄປທົ່ວທີບ (Autism Spectrum Disorder 299.00) Per DSM-5 ລວມທັງຣະດັບຄວາມຮ້າຍແຮງ 2 ຫລື 3 ໃນທັງສອງແຖວຕັ້ງ | ທ່ານໝໍຈິດວິທະຍາທີ່ມີໃບປະກາດ, ຜູ້ຝຶກຫັດນາຍຫມໍລົງທະບຽນທີ່ກ້າວຫນ້າ (ARNP) ທີ່ພົວພັນນຳໂຣກລະເມີເພີ້ຝັນ ຫລື ສູນກາງພັດທະນາ ຫລື ຄະນະກັມມະການຢັ້ງຢືນ: ທ່ານຫມໍໂຣກປະສາດ, ທ່ານຫມໍໂຣກຈິດ, ຫລື ທ່ານຫມໍປິ່ນປົວເດັກເຣື່ອງການເຕີບໂຕ ແລະ ການປະພຶດ | ການຕີຣາຄາປະເມີນຜົນຄົບຖ້ວນ DSM-V ທີ່ສອດຄ່ອງນຳກົດເກນຂອງການກວດວິຈັຍທຸກໆຢ່າງ, ຫລັກຖານຂອງການຊັກຊ້າ ຫລື ການທຳງານທີ່ຜິດປົກກະຕິກ່ອນອາຍຸ 3 ປີໃນຄວາມຊຳນານທາງສັງຄົມ, ພາສາ, ການຕິດຕໍ່ສື່ສານ ຫລື ການຫລິ້ນທີ່ເປັນສັນຍາລັກ ຫລື ການວາດພາບ, ແລະ ການກວດເບິ່ງຄວາມຊຳນານໃນການປັບຕົວຊຶ່ງສະແດງໃຫ້ເຫັນການມີຂອບເຂດຈຳກັດຮ້າຍແຮງໃນການທຳງານການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕໍ່າກວ່າກຳນົດ,ແລະ FSIQ ຂອງການແຕກຕ່າງຈາກມາດຕະຖານອັນນຶ່ງ ຫລື ຫລາຍກວ່ານັ້ນທີ່ຕໍ່າກວ່າກຳນົດ – ຫລື – ສອດຄ່ອງນຳກົດເກັນທຸກໆຢ່າງສຳລັບໂຣກ Autistic Disorder 299.00, DSM-IV. |
| ໂຣກປະສາດແນວອື່ນ ຫລື ສະພາບແນວອື່ນທີ່ຄ້າຍຄືກັນກັບຄວາມເສັ່ຽອິງຄະດ້ານມັນສະມອງ | ຄວາມຜິດປົກກະຕິທາງໂຣກປະສາດ ຫລື ກັມມະພັນເປັນທີ່ຮູ້ຈັກວ່າກໍ່ໃຫ້ເກີດມີຄວາມຂາດເຂີນໃນຄວາມຊຳນານທາງແນວຄິດ ແລະ ການປັບຕົວ | ທ່ານໝໍທີ່ມີໃບປະກາດ | ຄະແນນ Full Scale IQ ຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າ 1.5 ຢ່າງຕໍ່າກວ່າກຳນົດ, ແລະ ຄະແນນການສອບເບິ່ງຄວາມຊຳນານໃນການປັບຕົວຂອງການແຕກຕ່າງຈາກມາດຕະຖານຫລາຍກວ່າສອງຢ່າງຕໍ່າກວ່າກຳນົດ. |

ຫມາຍເຫດ: ໃບຟອມໃບນີ້ແມ່ນການຊີ້ນຳທົ່ວໄປເທົ່ານັ້ນ ແລະ **DDA** ອາດຈະຕ້ອງການລາຍລະອຽດ ຫລື ການຕີຣາຄາປະເມີນຜົນເພີ້ມເຕີມອີກ. ເອກສານບັນທຶກອັນນີ້ເປັນບາດກ້າວທຳອິດໃນການພິຈາຣະນາເບິ່ງເງື່ອນໄຂໄດ້ຮັບ. ເງື່ອນໄຂໄດ້ຮັບຂອງ **DDA** ຈະຖືກພິຈາຣະນາເບິ່ງໂດຍອີງຕາມກົດຫມາຍ **Chapter 388-823 WAC.**